# ຮຽກຮ້ອງສິດເກົ່າ ຂອງ ອົງການ EarthRights ໝົດທຸກທ່ານ!

*ພວກເຮົາມີຄວາມຍິນດີຕ້ອນຮັບສິດເກົ່າຂອງ* **ອົງການ EarthRights** *ໝົດທຸກທ່ານເພື່ອເຂົ້າຮ່ວມເຄືອຂ່າຍຂອງພວກເຮົາ*

**ຄວາມເປັນມາ**

ນັບຕັ້ງແຕ່ປີ 1999, , ອົງການ EarthRights ສາກົນ ໄດ້ສຳເລັດໃຫ້ການສຶກສາໃຫ້ແກ່ນັກສຶກສາຫຼາຍກ່ວາ 600 ທ່ານ ໂດຍຜ່ານໂປຣແກຣມການຝຶກອົບຮົມໃນຫົວຂໍ້ຕ່າງໆ.

ຊຶ່ງໃນນັ້ນລວມມີ ໂຮງຮຽນເພື່ອສິດທິຂອງປະເທດພະມ້າ ແລະ ໂຮງຮຽນ EarthRights ແມ່ນ້ຳຂອງໃນ ປະເທດພະມ້າ ແລະ ປະເທດໄທ, ສະຖະບັນການສະໜັບສະໜູນທາງດ້ານກົດໝາຍໃນພາກພື້ນແມ່ນ້ຳຂອງ, ສະມາຄົມກົດໝາຍ Bertha, ການຝຶກອົບຮົມກ່ຽວກັບສຸຂະພາບ ແລະ ໝາກຫົວໃຈ ຂອງ ອົງການ EarthRights, ທັດສະນະສຶກສາລະຫ່ວາງ ປະເທດ ໄທ-ລາວ, ແລະ ການຝຶກອົບຮົມໄລຍະສັ້ນໃນເລື່ອງຄວາມຍຸດຕິທຳດ້ານສະພາບອາກາດ. ນັກສຶກສາຂອງພວກເຮົາມາຈາກພາກພື້ນແມ່ນ້ຳຂອງ ຄືມາຈາກ ປະເທດ ກຳປູເຈຍ, ຈີນ, ລາວ, ພະມ້າ, ໄທ ແລະ ປະເທດ ຫວຽດນາມ.

ປະຈຸບັນນີ້, ສິດເກົ່າຂອງ ອົງການ EarthRights ໄດ້ຊ່ວຍປົກປ້ອງສິດທິມະນຸດ ແລະ ສິ່ງແວດລ້ອມຢູ່ໃນຊຸມຊົນຂອງເຂົາເຈົ້າ ຢູ່ທົ່ວພາກພື້ນແມ່ນ້ຳຂອງ ໂດຍນຳໃຊ້ທັກສະ, ແນວຄິດ ແລະ ການຮ່ວມມື ທີ່ຖືກພັດທະນາ ແລະ ແບ່ງປັນໃຫ້ ໂດຍຜ່ານຮູບແບບການຝຶກອົບຮົມທີ່ເປັນອັນສະເພາະຂອງ ອົງການ EarthRights. ຜູ້ປົກປ້ອງສິດທິເຫຼົ່ານັ້ນກຳລັງສ້າງຂຶ້ນໂດຍພວກເຂົາເອງ.

**ເປັນຫຍັງພວກເຮົາຈຶ່ງສ້າງ ເຄືອຂ່າຍສິດເກົ່າທີ່ເປັນທາງການຂຶ້ນມາ?**

ເນື່ອງຈາກຄວາມລ້າຫຼັງໃນລະບອບປະຊາທິປະໄຕ, ການຂາດຄວາມເຄົາລົບຕໍ່ສິດທິມະນຸດ, ກົດໝາຍທີ່ເຊື່ອມໂຊມ ແລະ ການແຜ່ລະບາດ, ສິດເກົ່າຂອງ ອົງການ EarthRights ຈຶ່ງໄດ້ມີການລົນນະລົງທີ່ຖືກຕ້ອງຕາມລະບຽບກົດໝາຍ ເພື່ອສິດທິມະນຸດ ແລະ ຊັບພະຍາກອນທຳມະຊາດ ທີ່ປະເຊີນກັບຄວາມສ່ຽງອັນໃຫຍ່ຫຼວງ.

ບັນດາຄວາມສ່ຽງໄດ້ເພີ່ມຂຶ້ນ ແລະ ໃນນັ້ນລວມເຖິງການກໍ່ອາດສະຍາກຳ ແລະ ການຂົ່ມຂູ່ທາງດ້ານຕຸລາການ

**ເປົ້າໝາຍຂອງພວກເຮົາ**

ອົງການ EarthRights ຕ້ອງການໃຫ້ສິດເກົາທີ່ມີຄວາມຮູ້, ທັກສະ ແລະ ເຄື່ອງມືທີ່ມີພະລັງ ເພື່ອສ້າງການປ່ຽນແປງ. ພວກເຮົາຕ້ອງການໃຫ້ເຂົາເຈົ້າປອດໄພໃນການເຂົ້າເຖິງ ແລະ ມຸມມອງທີ່ປະເມີນການບໍ່ໄດ້ ກ່ຽວກັບສິ່ງທ້າທາຍທີ່ຊຸມຊົນໄດ້ປະເຊີນຢູ່.

ພວກເຮົາຕ້ອງການສ້າງຄຳໝັ້ນສັນຍາ ໃນການເຮັດວຽກຮ່ວມກັນຢ່າງຕໍ່ເນື່ອງໃນເລື່ອງຄວາມຍຸດຕິທຳ ແລະ ຄວາມຮັບຜິດຊອບຕໍ່ສະພາບອາກາດ, ຜູ້ປົກປ້ອງສິດທິ ແລະ ຄວາມຮັບຜິດຊອບຂອງອົງກອນ.

ພວກເຮົາຈະເຮັດວຽກກັບທ່ານເພື່ອສ້າງເຄືອຂ່າຍສິດເກົ່າໃຫ້ມີຄວາມໝາຍ, ມີປະສິດທິພາບ ແລະ ມີຄວາມຍືນຍົງ ເພື່ອໃຫ້ບັນລຸຕາມເປົ້າໝາຍ

**ວິທີການຂອງພວກເຮົາ**

EarthRights International

ພວກເຮົາຈະສ້າງເຄືອຂ່າຍສິດເກົ່າ ຕັ້ງແຕ່ຕົ້ນຈົນຈົບ ດ້ວຍການຮັບຟັງ ແລະ ອອກແບບຮ່ວມກັນກັບທ່ານ ເພື່ອຊ່ວຍໃຫ້ທ່ານ ໄດ້ພົບກັບຄວາມຕ້ອງການ ແລະ ສິ່ງທີ່ທ້າທາຍ. ທ່ານຈະບອກເຮົາວ່າ ສື່ ແລະ ຮູບແບບໃດທີ່ຈະຊ່ວຍໃຫ້ທ່ານໄດ້ທຳງານເພື່ອໃຫ້ມີສ່ວນຮ່ວມຫຼາຍທີ່ສຸດ. ຮັບປະກັນວ່າຄວາມປອດໄພຂອງທ່ານຈະເປັນບູລິມະສິດຫຼັກ

ພວກເຮົາຈະໃຫ້ຄວາມສຳຄັນຕໍ່ກັບການມີສ່ວນຮ່ວມທາງສັງຄົມ ແລະ ບົດບາດຍິງ-ຊາຍ, ໂດຍມີການຄຳນຶງເຖິງຄວາມໂປ່ງໃສ ເປັນຄ່ານິຍົມຫຼັກຂອງເຄືອຂ່າຍ. ບັນດາສະມາຊິກທີມງານຂອງກຸ່ມຈະໄດ້ຖືກຄັດເລືອກຂຶ້ນມາ ເພື່ອສ້າງແຜນທີ່ບໍລິບົດ ຫຼື ສະພາບການ ແລະ ເປັນຜູ້ນຳໃນການວາງແຜນຍຸດທະສາດ. ພາຍຫຼັງທີ່ປ້ອນຂໍ້ມູນຂອງສິດເກົ່າທັງໝົດແລ້ວ, ພວກເຮົາຈະເລີ່ມຂະບວນການອອກແບບເຄືອຂ່າຍ.

ຫຼັງຈາກອອກແບບແລ້ວ, ພວກເຮົາຈະໂນ້ມນ້າວສິດເກົ່າໝົດທຸກທ່ານປະກອບຄຳຄິດເຫັນເພື່ອເຮັດໃຫ້ເຄືອຂ່າຍໄດ້ສຳເລັດສົມບູນແບບ

**ເຄືອຂ່າຍຈະຊ່ວຍ:**

- ສະໜັບສະໜູນຜູ້ປົກປ້ອງສິດທິໃຫ້ເຂົ້າເຖິງການຝຶກອົບຮົມ, ຊັບພະຍາກອນທາງດ້ານງົບປະມານ ແລະ ວິຊາການ. ຊຶ່ງມັນຈະເປັນເຄືອຂ່າຍລະດັບພາກພື້ນທີ່ໃຫຍ່ ແລະ ຫຼາກຫຼາຍ ສຳລັບການແບ່ງປັນຂໍ້ມູນ, ການວາງຍຸດທະສາດ ແລະ ການຮ່ວມມື.
- ສະໜັບສະໜູນສິດເກົ່າດ້ວຍຊັບພະຍາກອນເພື່ອການພັດທະນາ ແລະ ດຳເນີນກິດຈະກຳ ກ່ຽວກັບຄວາມຍຸດຕິທຳ ແລະ ຄວາມຮັບຜິດຊອບຕໍ່ສະພາບອາກາດ.
- ສົ່ງເສີມການເປັນຢູ່ລະຫ່ວາງສິດເກົ່າຂອງ ອົງການ earth rights ເພື່ອໃຫ້ເຂົາເຈົ້າສາມາດດູແລຕົນເອງໄດ້. ສູນ Mitharsuu ຂອງພວກເຮົາ ຈະເຮັດໜ້າທີ່ເປັນສູນກາງແຫ່ງຄວາມສະໜານສາມັກຄີ ແລະ ຮຽນຮູ້.
- ສ້າງການເຂົ້າເຖິງຄວາມຮູ້, ຊັບພະຍາກອນ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເພື່ອເຮັດໃຫ້ຜູ້ປົກປ້ອງສິດທິ ສາມາດຈັດຕັ້ງປະຕິບັດວຽກງານໄດ້ຢ່າງປອດໄພ ແລະ ມີປະສິດທິພາບ ທັງກາຍຍະພາບ ແລະ ດີຈິຕອນ.
- ສ້າງຄວາມສາມາດໃຫ້ສິດເກົ່າໃນເລື່ອງການບໍລິຫານຈັດການຄວາມສ່ຽງ, ຄວາມປອດໄພ ແລະ ຄວາມໝັ້ນຄົງ, ແລະ ການໃຫ້ຄຳແນະນຳດ້ານອາດສະຍາກອນ ແລະ ການລ່ວງລະເມີດທາງດ້ານຕຸລາການ.
- ສະໜັບສະໜູນສິດເກົ່າໃນປະເທດ ພະມ້າ ໃນກໍລະນີສຸກເສີນ ຕາມສະພາບແວດລ້ອມທີ່ເປັນບໍລະປັກຕໍ່ນັກເຄື່ອນໄຫວພາຍຫຼັງລັດຖະປະຫານ.

ເຄືອຂ່າຍທີ່ສ້າງຂຶ້ນຢ່າງເປັນທາງການ ຈະຕອບສະໜອງ ແລະ ມີປະສິດທິພາບ ໃນການສົ່ງມອບເຄື່ອງມື, ພື້ນທີ່ຄວາມປອດໄພດ້ານກາຍຍະພາບ, ຮູບແບບດິຈິຕອນທີ່ປອດໄພ ແລະ ຊັບພະຍາກອນ.

ມັນຈະຊ່ວຍສ້າງຄວາມສາມາດຂອງຜູ້ປົກປ້ອງ ໃນການກຳນົດຍຸດທະສາດ, ຮ່ວມມື, ແລະ ສົ່ງມອບການຝຶກອົບທີ່ນຳພາໂດຍຊຸມຊົນ, ຄະດີຄວາມ ແລະ ການລົນນະລົງ ເພື່ອສະໜັບສະໜູນຊຸມຊົນ ທີ່ຢູ່ແນວໜ້າຂອງການຮັບມືກ່ຽວກັບວິກິດການສະພາບອາກາດ. ມັນຈະຊ່ວຍເພີ່ມຜົນ ຕໍ່ກັບວຽກງານຢູ່ໃນລະດັບພາກພື້ນ ແລະ ລະດັບໂລກ.

**ກອບເວລາ ແລະ ຂັ້ນຕອນທຳອິດ**

ເພື່ອສ້າງເຄືອຂ່າຍນີ້, ພວກເຮົາຕ້ອງການໆມີສ່ວນຮ່ວມກັບທ່ານ ເພື່ອທຳຄວາມເຂົ້າໃຈ ວ່າໃນຂະນີ້ທ່ານກຳລັງມີສ່ວນຮ່ວມໃນການປົກປ້ອງ earth rights ຫຼື ບໍ່?, ແລະ ຖ້າເປັນເຊັ່ນນັ້ນ, ແມ່ນຫຍັງເປັນບູລິມະສິດ, ຄວາມຕ້ອງການ ແລະ ຄວາມທ້າທາຍຂອງທ່ານຢູ່ໃນຂະນີ້?

ຂັ້ນຕອນທີ່ເຮົາຈະເຮັດ, ພວກເຮົາຈະຕິດຕໍ່ຫາທ່ານຕາມໄລຍະເວລາລຸ່ມນີ້:

- **ເດືອນ ພະຈິກ 2021:** ອັບເດດສະຖານະປະຈຸບັນຂອງສິດເກົ່າ (ຍັງໃຊ້ງານໄດ້ ຫຼື ບໍ່) ແລະ ລວບລວມຂໍ້ມູນຂອງສິດເກົ່າ ແລະ ວຽກງານໃນການປົກປ້ອງສິດທິ. ນອກຈາກນີ້, **ສະມາຊິກໃນທີມງານຫຼັກຂອງເຄືອຂ່າຍສິດເກົ່າ*** ຍັງຖືກລະບຸວ່າ ຈະໃຫ້ການສະໜັບສະ

ໜູນໃນການສ້າງ ແລະ ອອກແບບຮ່ວມກັນຂອງການສ້າງເຄືອຂ່າຍສິດເກົ່າຂອງ ອົງການ EarthRights ເພື່ອໃຫ້ເປັນແຫຼ່ງຊັບພະຍາກອນ ແລະ ເປັນສູນກາງເຄືອຂ່າຍ ສໍາລັບກຸ່ມຜູ້ທີ່ມີສ່ວນຮ່ວມຂອງສິດເກົ່າທັງໝົດ.

- ເດືອນ ພະຈິກ - ເດືອນ ທັນວາ **2021**: ລົມ ແລະ ມີສ່ວນຮ່ວມກັບສິດເກົ່າ ທົ່ວພາກພື້ນ ດ້ວຍຮູບແບບການຮັບຟັງແບບສະເໝືອນຈິງ ຫຼື ທາງອອນໄລ ເພື່ອປຶກສະຫະລື ກ່ຽວກັບການພັດທະນາການຮ່ວມມື, ການມີສ່ວນຮ່ວມ, ກິດຈະກໍາການສ້າງເຄືອຂ່າຍ ແລະ ເປັນຄູ່ຮ່ວມງານກັບ ອົງການ EarthRights.

- **ຕົ້ນເດືອນ - ກາງເດືອນ ມັງກອນ 2022:** ດໍາເນີນການປະເມີນກ່ຽວກັບຄວາມຕ້ອງການ ເພື່ອກໍານົດສິ່ງທີ່ພວກເຂົາຕ້ອງການ ແລະ ວິທີການທີ່ພວກເຮົາສາມາດສະໜັບສະໜູນເຂົາເຈົ້າ. ກິດຈະກໍານີ້ຈະຖືກຈັດຂຶ້ນໂດຍຜ່ານຊ່ອງທາງການສື່ສານແບບເຄື່ອນທີ່ທີ່ປອດໄພ ຫຼື ຜ່ານທາງໂທລະສັບ

**ພົວພັນຫາພວກເຮົາຕາມອີເມວທີ່ລະບຸໄວ້ຂ້າງລຸ່ມ:**

Email: alumninetwork@earthrights.org and earthrights.alumninetwork@protonmail.com

*ຈຸດປະສົງຂອງສະມາຊິກທີມງານຫຼັກ ແມ່ນເພື່ອສະໜັບສະໜູນ ໃນການສ້າງ ແລະ ອອກແບບເຄືອຂ່າຍສິດເກົ່າຂອງ ອົງການ EarthRights ໃຫ້ເປັນສູນກາງເຄືອຂ່າຍ ແລະ ຊັບພະຍາກອນ ສໍາລັບກຸ່ມສິດເກົ່າທີ່ໄດ້ມີສ່ວນຮ່ວມທັງໝົດ